ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ຮ່ວມສົນທະນາໃນກອງປະຊຸມ ສຸດຍອດວ່າດ້ວຍຊັບສິນດ້ານມະນຸດໃນ ສປປ ລາວ




ໃນຕອນເຊົ້າຂອງວັນທີ 25 ພຶດສະພາ 2023 ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ເຂົ້າຮ່ວມກອງປະຊຸມສຸດຍອດວ່າດ້ວຍຊັບສິນດ້ານມະນຸດໃນ ສປປ ລາວ ທີ່ຫໍປະຊຸມແຫ່ງຊາດ ໂດຍການໃຫ້ກຽດເປັນປະທານຂອງພະນະທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ  ຊຶ່ງກອງປະຊຸມໃນຄັ້ງນີ້ ໄດ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນເປັນຕົ້ນແມ່ນບັນດາຮອງນາຍົກລັດຖະມົນຕີ, ບັນດາກະຊວງຂອງລັດຖະບານ, ບັນດາເຈົ້າແຂວງ ແລະ ຮອງເຈົ້າແຂວງ, ເອກອັກຄະລັດຖະທູດ ແລະ ອົງການຈັດຕັ້ງສາກົນເຂົ້າຮ່ວມເປັນຈຳນວນຫຼາຍ.

**ຈຸດປະສົງຂອງກອງປະຊຸມສຸດຍອດໃນຄັ້ງນີ້**ແມ່ນ ເພື່ອປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນ ກ່ຽວກັບການພັດທະນາຊັບສິນດ້ານມະນຸດໃນໄລຍະຜ່ານມາ ແລະ ຊອກຫາທິດທາງ, ວິທີການ ແລະ ມາດຕະການ ເພື່ອປັບປຸງໃນຕໍ່ໜ້າ ໂດຍມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ລວມທັງການສະໜັບສະໜູນຊ່ວຍເຫຼືອຈາກສາກົນ ແລະ ຄູ່ຮ່ວມພັດທະນາຕ່າງໆ ໃນຫຼາຍດ້ານເຊັ່ນ: ດ້ານເສດຖະກິດ, ດ້ານການສຶກສາ, ດ້ານການພັດທະນາຊັບພະຍາກອນມະນຸດ, ດ້ານວັດທະນະທຳສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ອື່ນໆ.




ໃນກອງປະຊຸມຄັ້ງນີ້ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຮັບກຽດຂຶ້ນເວທີສົນທະນາໃນວາລະກ່ຽວກັບການປະກອບງົບປະມານເຂົ້າໃນການສຶກສາໃນໄລຍະກ່ອນ ແລະ ຫຼັງການແຜ່ລະບາດຂອງພະຍາດໂຄວິດ 19 ຮ່ວມກັບ ປະທານກຳມະທິການວັດທະນາທຳ ແລະ ສັງຄົມ ສະພາແຫ່ງຊາດ, ຮອງເຈົ້າແຂວງຊຽງຂວາງ ແລະ ຮອງປະທານສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ທີ່ແລກປ່ຽນກ່ຽວກັບສະພາບຂອງການເຂົ້າເຖິງການສຶກສາຂອງນັກຮຽນ ແລະ ວິທີທາງສ້າງວິຊາອາຊີບໃຫ້ແກ່ໄວໜຸ່ມທີ່ໄດ້ຮັບຜົນກະທົບໂດຍກົງຈາກການແຜ່ລະບາດຂອງພະຍາດໂຄວິດ 19.




**ພາບ-ຂ່າວ ຈາກ: ທ່ານ ສຸລິຍາ ໝື່ນວິເສດ**

## ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ